# ແຫລ່ງຂໍ້ມູນພະຍາດໂຄວິດ 19

**ຄວາມຮຸນແຮງພາຍໃນຄອບຄົວ ໃນຊ່ວງການແຍກຕົວ:**
ພວກເຮົາຮູ້ວ່າ ການທໍາລຸນ ແລະ ຄວາມຮຸນແຮງໄດ້ເພີ່ມຂຶ້ນ ໃນຊ່ວງການແຍກຕົວ.
API Chaya ແມ່ນມຸ່ງໝັ້ນເປີດໃຫ້ບໍລິການ. ພວກເຮົາຮູ້ວ່າ ຫລາຍຄົນກໍາລັງພັກຢູ່ທີ່ບ້ານ ແລະ ໄດ້ເຂົ້າເຖິງ ຊຸມຊົນໜ້ອຍ ແລະ ແຫລ່ງຂໍ້ມູນອື່ນໆ ຜ່ານວຽກ ແລະ ກິດຈະກໍາປະຈໍາວັນອື່ນໆ (ການເດີນທາງ, ເຂົ້າຍິມ, ກິດຈະກໍາ ທາງສັງຄົມ ແລະ ອື່ນໆ). ພວກເຮົາຮູ້ວ່າ ສຸຂະພາບທາງກາຍະພາບ, ຈິດໃຈ ແລະ ວິນຍານ ແມ່ນໄດ້ຮັບຜົນກະທົບ ແລະ ເຊື່ອມໂຍງກັນ. ພວກເຮົາຮູ້ວ່າ ຊຸມຊົນຄົນພິການ ແມ່ນໄດ້ສ້າງເຄືອຂ່າຍດູແລ ແລະ ແຫລ່ງຂໍ້ມູນຕ່າງໆ ດົນນານ ມາແລ້ວ ແລະ ວຽກພວກເຮົາແມ່ນຍັງຈະສືບຕໍ່ດໍາເນີນການຕໍ່ໄປ.

API CHAYA ແມ່ນເປີດໃຫ້ບໍລິການ

ພວກເຮົາໄດ້ປ່ຽນເປັນການດໍາເນີນການຜ່ານທາງໄກ. ພວກເຮົາເປີດບໍລິການຕາມໝາຍເລກຊ່ວຍເຫລືອຂອງພວກເຮົາ (1-877-922-4292) ແລະ ໝາຍເລກຫ້ອງການ (206-467-9976) ແຕ່ວັນຈັນເຖິງວັນສຸກ, 10am ຫາ 4pm.
ຫລັງຈາກແຫລ່ງຂໍ້ມູນໃນໂມງວຽກ:
National Domestic Violence Hotline: 1-800-799-7233
King County Sexual Assault Resource Center: 1-888-998-6423
National Human Trafficking Hotline: 1-888-373-7888
ພວກເຮົາໃນຖານະຊຸມຊົນ ອາດຈະສືບຕໍ່ດໍາເນີນການດູແລລວມ, ພວກເຮົາຫວັງວ່າແຫລ່ງຂໍ້ມູນນີ້ ສາມາດຊ່ວຍເຫລືອການດໍາເນີນການນີ້ໄດ້.

**ຊ່ວຍເຫລືອທຸລະກິດເມືອງຈີນ/ເມືອງສາກົນ:**
ບັນຫາຄວາມຢ້ານກົວຊາວຕ່າງປະເທດ ແລະ ບາດແຜ່ຕ່າງໆໃນທຸລະກິດຄົນອາເມກາເຊື້ອສາຍອາຊີ ແມ່ນຈະເຮັດໃຫ້ ຄົນບໍ່ສະໜັບສະໜູນທຸລະກິດຂະໜາດນ້ອຍ ແລະ ຮ້ານອາຫານໃນເມືອງຈີນ-ສາກົນຂອງລັດຊີເອໂທ ເປັນເວລາຫລາຍ ເດືອນຕອນນີ້.

ເຈົ້າຂອງບາງທຸລະກິດ ແມ່ນໄດ້ລາຍງານການຫລຸດລົງ 60% ຂອງທຸລະກິດ. ເຈົ້າຂອງທຸລະກິດບາງຄົນເຖິງຕ້ອງລົມກັນ ຢ່າງໜັກໃນການເລີກຈ້າງພະນັກງານ ຫລື ການປິດບໍລິສັດຂອງເຂົາເຈົ້າ.
ສະແດງ ແລະ ຊ່ວຍເຫລືອທຸລະກິດ AAPI ແມ່ນບາງສິ່ງ ທີ່ພວກເຮົາທັງໝົດສາມາດເຮັດ ເພື່ອຊ່ວຍເຫລືອຜູ້ທີ່ໄດ້ຮັບ ຜົນກະທົບໂດຍກົງ ຈາກການຕໍ່ຕ້ານຄົນອາຊີ, ຜູ້ຄົນທັງໝົດ ຂະນະທີ່ກໍາລັງກິນ ແລະ ຊື້ເຄື່ອງໃນສະຖານທີ່ປະກອບການ.

**ແຫລ່ງຂໍ້ມູນ APA Labor Alliance:**
ໃນລັດວໍຊິງຕັນ, ພະນັກງານລັດທັງໝົດ ຈະສືບຕໍ່ໄດ້ຮັບເງິນເດືອນໃນຊ່ວງເວລານີ້. ແນວໃດກໍ່ຕາມ, ຫາກບໍ່ມີນະໂຍບາຍ ຈາກລັດຖະບານກາງ ທີ່ຮັບປະກັນການລາພັກທີ່ໄດ້ຮັບຄ່າຈ້າງ ແລະ ການປະກັນສຸຂະພາບ ທີ່ພຽງພໍ ສໍາລັບຄົນງານທັງ ໝົດ, ປະຊາຊົນທີ່ກໍາລັງເຮັດວຽກຫລາຍຄົນ ຈະໄດ້ຮັບການປົກປ້ອງຢ່າງມີປະສິດທິພາບ ຈາກການປະຕິບັດຕາມຄໍາແນະ ນໍາຂອງ CDC ເພື່ອໃຫ້ພັກຢູ່ທີ່ບ້ານ ໃນຂະນະທີ່ເຂົາເຈົ້າເຈັບປ່ວຍ.

ກວດເບິ່ງຊຸດເຄື່ອງມືຂອງ APALA ຂອງພວກເຮົາ ໄດ້ທັງໝົດຢູ່ທີ່ນີ້. ກວດເບິ່ງແຫລ່ງຂໍ້ມູນການແຜ່ລະບາດ ຂອງພະຍາດໂຄວິດ 19 ຂອງ AFL-CIO.

**ການຊ່ວຍເຫລືອທາງເສດຖະກິດ ສໍາລັບບຸກຄົນ: ການຊ່ວຍເຫລືອການຕື່ມຟອມເປັນພາສາຕ່າງໆ:** Chinese Information Service Center ສາມາດຊ່ວຍທ່ານໃນການຕື່ມແບບຟອມ ແລະ ການຂໍສະໝັກທີ່ຈໍາເປັນ ເພື່ອເປັນເງື່ອນໄຂຂໍການຊ່ວຍເຫລືອໃນຊ່ວງພະຍາດໂຄວິດ 19. ເຂົ້າເບິ່ງເວັບໄຊຂອງພວກເຮົາ ຢູ່ທີ່ https://cisc-seattle.org/covid19/ ເພື່ອເຂົ້າເຖິງແຫລ່ງຂໍ້ມູນ ຫລື ຕິດຕໍ່ໂດຍກົງກັບພະນັກງານທີ່ສາມາດຊ່ວຍເຫລືອທ່ານໄດ້!